ກະຊວງຄົມມະນາຄົມຂົນສົ່ງ
ໄປສະນີແລະກໍ່ສ້າງ
ເລກທີ: 1894
ວັນທີ: 14/11/06

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

-----------------------------

ສໍານັກງານນາຍົກລັດຖະມົນຕີ

ເລກທີ 252 / ນຍ

ນະຄອນຫລວງວຽງຈັນ, ວັນທີ 06.11.2006

# ດໍາລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກໍາມະການແຫ່ງຊາດ ດ້ານຄວາມປອດໄພຕາມທ້ອງຖະໜົນ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບ ເລກທີ 02/ ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ ສະບັບເລກທີ 0397 / ສພຊ, ລົງວັນທີ 12 / 04 / 1997;
- ອີງຕາມ ກົດໝາຍ ວ່າດ້ວຍທາງຫລວງ ສະບັບເລກທີ 04 / 99 / ສພຊ, ລົງວັນທີ 03 / 04 / 1999;
- ອີງຕາມ ກົດໝາຍ ວ່າດ້ວຍການຈະລາຈອນທາງບົກ ສະບັບເລກທີ 02/ ສພຊ, ລົງວັນທີ 08 / 04 / 2000;
- ອີງຕາມ ດໍາລັດ ຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ສະບັບເລກທີ 104 / ນຍ, ລົງວັນທີ 26 / 04 / 2005 ວ່າດ້ວຍການຮັບຮອງແຜນຍຸດທະສາດ ແລະ ແຜນດໍາເນີນງານຄວາມປອດໄພຕາມທ້ອງຖະໜົນ;
- ອີງຕາມ ການສະເໜີ ຂອງລັດຖະມົນຕີວ່າການ ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ສະບັບເລກທີ 3005 / ຄຂປກ, ລົງວັນທີ 13 ຕຸລາ 2006 .

### ນາຍົກລັດຖະມົນຕີ ອອກດໍາລັດ :

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1.** ຈຸດປະສົງ

ດໍາລັດສະບັບນີ້ ກໍານົດພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ຂອງ ຄະນະກໍາມະການແຫ່ງຊາດ ດ້ານຄວາມປອດໄພຕາມທ້ອງຖະໜົນ ເພື່ອຈັດຕັ້ງປະຕິບັດແຜນຍຸດທະສາດ ແລະ ແຜນການດໍາເນີນງານດ້ານຄວາມປອດໄພຕາມທ້ອງຖະໜົນໃຫ້ມີປະສິດທິຜົນ ແນໃສ່ປ້ອງກັນ ແລະ ຫລຸດຜ່ອນການເກີດອຸປະຕິເຫດທາງຖະໜົນ ໃນຂອບເຂດທົ່ວປະເທດ ໂດຍມີການເຂົ້າຮ່ວມປະກອບສ່ວນດໍາເນີນການ ຂອງຫລາຍພາກສ່ວນ ແລະ ຂະແໜງການທີ່ກ່ຽວຂ້ອງ.

ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ ຂອງຄະນະກຳມະການແຫ່ງຊາດ ດ້ານຄວາມປອດໄພຕາມທ້ອງຖະໜົນ .

ຄະນະກຳມະການແຫ່ງຊາດດ້ານຄວາມປອດໄພຕາມທ້ອງຖະໜົນ ແມ່ນອົງການຈັດຕັ້ງຂອງລັດທີ່ບໍ່ປະຈຳການ ມີຊື່ຫຍໍ້ວ່າ ( ຄຊປທ) ມີຫ້ອງການປະຈຳຢູ່ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ. ຄະນະດັ່ງກ່າວ ມີພາລະບົດບາດ ເປັນຜູ້ຊ່ວຍລັດຖະບານ ໃນການແນະນຳ, ຕິດຕາມ, ກວດກາ, ຊຸກຍູ້ ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ, ກະຊວງ ປ້ອງກັນຄວາມສະຫງົບ, ບັນດາກະຊວງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄ້ວາຮ່າງນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍກ່ຽວ ກັບຄວາມປອດໄພຕາມທ້ອງຖະໜົນ ແລະ ໃນການຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍດັ່ງກ່າວ ໃນຂອບເຂດທົ່ວປະເທດ ; ໂຄສະນາ, ຂົນຂວາຍ , ຍາດແຍ່ງທຶນຮອນ ແລະ ເຕັກນິກວິ ຊາການຈາກພາກສ່ວນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ເພື່ອລົງທຶນເຂົ້າໃນວຽກງານ ຮັກສາຄວາມ ປອດໄພຕາມທ້ອງຖະໜົນ ; ເປັນໃຈກາງໃນການພົວພັນ, ປະສານງານກັບທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດໃນການປະຕິບັດວຽກງານຄວາມປອດໄພຕາມທ້ອງຖະໜົນ ຂອງ ສປປ ລາວ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

ມາດຕາ 3. ໜ້າທີ່

ຄະນະກຳມະການແຫ່ງຊາດດ້ານຄວາມປອດໄພຕາມທ້ອງຖະໜົນ ມີໜ້າທີ່ຕົ້ນຕໍ ດັ່ງນີ້ :

3.1. ຄົ້ນຄ້ວາ, ຜັນຂະຫຍາຍແຜນຍຸດທະສາດ ແລະ ນະໂຍບາຍແຫ່ງຊາດ ດ້ານຄວາມປອດໄພຕາມທ້ອງຖະໜົນມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ເພື່ອແນະນຳ ແລະ ຊຸກຍູ້ໃຫ້ບັນດາກະຊວງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ;

3.2. ສັງລວມ ແລະ ລາຍງານຜົນ ຂອງການຈັດຕັ້ງປະຕິບັດແຜນການ, ແຜນງານ ແລະ ໂຄງການໃຫ້ລັດຖະບານຮັບຊາບ ໃນແຕ່ລະໄລຍະ;

3.3. ໂຄສະນາ, ເຜີຍແຜ່ ແລະ ສະໜອງຂໍ້ມູນຂ່າວສານ ກ່ຽວກັບວຽກງານດ້ານຄວາມປອດໄພຕາມທ້ອງຖະໜົນ ໃຫ້ແກ່ປະຊາຊົນ ແລະ ພາກສ່ວນຕ່າງໆ ຢູ່ພາຍໃນ ແລະ ຕ່າງປະເທດ ໄດ້ຮັບຊາບຢ່າງກ້ວາງຂວາງ.

3.4. ຄຸ້ມຄອງທຶນ ແລະ ອະນຸມັດທຶນເຂົ້າໃນແຜນການ, ແຜນງານ ແລະ ໂຄງການຕ່າງໆ ທີ່ລັດຖະບານໄດ້ອະນຸມັດໄປແລ້ວຢ່າງມີປະສິດທິຜົນ, ພ້ອມກັນນັ້ນກໍ່ຂຶ້ນແຜນງົບປະມານ ບໍລິຫານປະຈຳປີ ຂອງ ຄຊປທ ເພື່ອຂໍອະນຸມັດຈາກລັດຖະບານ;

3.5. ຄົ້ນຄ້ວາ ອອກຂໍ້ຕົກລົງ ແລະ ແບບແຜນວິທີເຮັດວຽກຂອງ ຄຊປທ ແລະ ໜ້າທີ່ຂອງກອງເລຂາ ຄຊປທ ເພື່ອເຄື່ອນໄຫວວຽກງານໃຫ້ມີປະສິດທິຜົນ;

3.6. ສຶກສາ, ຄົ້ນຄ້ວາຄືນ ແຜນຍຸດທະສາດ, ນະໂຍບາຍແຫ່ງຊາດ ດ້ານຄວາມປອດໄພຕາມທ້ອງຖະໜົນ ໃຫ້ສອດຄ່ອງກັບສະພາບຕົວຈິງໃນແຕ່ລະໄລຍະ ແລ້ວນຳສະເໜີຂໍອະນຸມັດຈາກລັດຖະບານ .

**ມາດຕາ 4. ຂອບເຂດສິດ**

ຄະນະກຳມະການແຫ່ງຊາດ ດ້ານຄວາມປອດໄພຕາມທ້ອງຖະໜົນ ມີສິດ ດັ່ງນີ້ :

4.1. ພິຈາລະນາຕົກລົງ ແຕ່ງຕັ້ງ ຄະນະກຳມະການດ້ານຄວາມປອດໄພຕາມທ້ອງຖະໜົນ ຢູ່ບັນດາແຂວງ, ນະຄອນ ແລະ ພິຈາລະນາຮັບຮອງເອົາພາລະບົດບາດ ແລະ ແຜນການດຳເນີນງານຂອງຄະນະກຳມະການດັ່ງກ່າວ;

4.2. ປຸກລະດົມ, ຂົນຂວາຍປະຊາຊົນ, ບັນດາອົງການຈັດຕັ້ງ ທັງພາກລັດ ແລະ ເອກະຊົນໃຫ້ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດວຽກງານດ້ານຄວາມປອດໄພຕາມທ້ອງຖະໜົນ;

4.3. ປະສານງານ ແລະ ຮ່ວມມືກັບອົງການສາກົນ ແລະ ຕ່າງປະເທດ ໂດຍສະເພາະແມ່ນຢູ່ໃນຂົງເຂດພາກພື້ນ ແລະ ອາຊຽນ ເພື່ອຍາດແຍ່ງການຊ່ວຍເຫລືອດ້ານທຶນຮອນ, ບົດຮຽນ ແລະ ວິຊາການ;

4.4. ຄຸ້ມຄອງ ແລະ ນຳໃຊ້ງົບປະມານປະຈຳປີ, ທຶນຮອນທີ່ໄດ້ຮັບການສະໜັບສະໜູນ ແລະ ຊ່ວຍເຫລືອເຂົ້າໃນວຽກງານຂອງຕົນ ຢ່າງມີປະສິດທິຜົນ;

4.5. ຮຽກເຊີນ ພາກສ່ວນຕ່າງໆທີ່ກ່ຽວຂ້ອງເຂົ້າຮ່ວມປະຊຸມ ເພື່ອປຶກສາຫາລື ແລະ ຄົ້ນຄ້ວາແກ້ໄຂບັນຫາຕ່າງໆ ກ່ຽວກັບວຽກງານດ້ານຄວາມປອດໄພຕາມທ້ອງຖະໜົນ;

4.6. ແນະນຳ ພາກສ່ວນສ່ວນຕ່າງໆທີ່ກ່ຽວຂ້ອງ ອອກຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ ແລະ ຄຳແນະນຳກ່ຽວກັບການຕ້ານ ແລະ ສະກັດກັ້ນ ການເກີດອຸບັດຕິເຫດທາງຖະໜົນ;

4.7. ອອກຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ ຫລື ຄຳແນະນຳ ເພື່ອຈັດຕັ້ງປະຕິບັດກົດໝາຍ, ມະຕິຄຳສັ່ງຂອງລັດຖະບານ ກ່ຽວກັບວຽກງານດ້ານຄວາມປອດໄພຕາມທ້ອງຖະໜົນ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 5. ໂຄງປະກອບກົງຈັກ**

ການຈັດຕັ້ງ ຂອງຄະນະກຳມະການແຫ່ງຊາດ ດ້ານຄວາມປອດໄພຕາມທ້ອງຖະໜົນ ເປັນການຈັດຕັ້ງທີ່ບໍ່ປະຈຳການ ແຕ່ມີຫ້ອງການຊ່ວຍວຽກ ໂດຍຖືເອົາກົມຂົນສົ່ງ ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເປັນກອງເລຂາ, ໂດຍແມ່ນຫົວໜ້າກົມຂົນສົ່ງ ເປັນຫົວໜ້າກອງເລຂາ ແລະ ບັນດາຮອງກົມຂົນສົ່ງ ເປັນຮອງຫົວໜ້າກອງເລຂາ, ປະກອບມີ ພະນັກງານປະຈຳການຈຳນວນໜຶ່ງ ຕາມຄວາມເໝາະສົມ. ສ່ວນຄະນະກຳມະການ ດ້ານຄວາມປອດໄພຕາມທ້ອງຖະໜົນ ຂອງແຂວງ, ນະຄອນ ນັ້ນແມ່ນໃຫ້ຖື

ເອົາພະແນກ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເປັນຫ້ອງການປະຈຳ ໂດຍແມ່ນຮອງຫົວໜ້າພະແນກດັ່ງກ່າວ ຊຶ່ງຊີ້ນຳວຽກງານຂົນສົ່ງ ເປັນຫົວໜ້າຫ້ອງການປະຈຳ.

**ມາດຕາ 6.** ໂຄງປະກອບດ້ານບຸກຄະລາກອນ

ຄະນະກຳມະການແຫ່ງຊາດ ດ້ານຄວາມປອດໄພຕາມທ້ອງຖະໜົນ ໂດຍຕຳແໜ່ງ ປະກອບດ້ວຍ:

1. ຮອງນາຍົກ ລັດຖະມົນຕີ ເປັນປະທານ;
2. ລັດຖະມົນຕີ ວ່າການ ກະຊວງ ຄຂປກ ເປັນຮອງປະທານ ແລະ ທັງເປັນຜູ້ປະຈຳການ;
3. ລັດຖະມົນຕີ ວ່າການ ກະຊວງ ປ້ອງກັນຄວາມສະຫງົບ ເປັນຮອງປະທານ;
4. ລັດຖະມົນຕີ ຊ່ວຍວ່າການ ກະຊວງ ສາທາລະນະສຸກ ເປັນກຳມະການ;
5. ລັດຖະມົນຕີ ຊ່ວຍວ່າການ ກະຊວງ ສຶກສາທິການ ເປັນກຳມະການ;
6. ລັດຖະມົນຕີ ຊ່ວຍວ່າການ ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ ເປັນກຳມະການ;
7. ລັດຖະມົນຕີ ຊ່ວຍວ່າການ ກະຊວງ ການເງິນ ເປັນກຳມະການ;
8. ຫົວໜ້າກົມຂົນສົ່ງ, ກະຊວງ ຄຂປກ ເປັນເລຂານຸການ.

ສ່ວນຢູ່ໃນບັນດາແຂວງ ແລະ ນະຄອນຫລວງ, ຄະນະກຳມະການແຫ່ງຊາດ ດ້ານຄວາມປອດໄພຕາມທ້ອງຖະໜົນ ຈະພິຈາລະນາຕົກລົງແຕ່ງຕັ້ງ ຄະນະກຳມະການດ້ານຄວາມປອດໄພຕາມທ້ອງຖະໜົນຂຶ້ນ ໂດຍແມ່ນຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນ ເປັນປະທານ ແລະ ປະກອບມີບັນດາຫົວໜ້າພະແນກການທີ່ກ່ຽວຂ້ອງ ເປັນກຳມະການ.

## ໝວດທີ IV

## ລະບອບແບບແຜນວິທີເຮັດວຽກ, ໜ້າທີ່ ແລະ ຂອບເຂດສິດ ຂອງປະທານ, ຮອງປະທານ, ຄະນະກຳມະການ ແລະ ຫົວໜ້າກອງເລຂາ

**ມາດຕາ 7.** ແບບແຜນວິທີເຮັດວຽກ

ຄະນະກຳມະການແຫ່ງຊາດ ດ້ານຄວາມປອດໄພຕາມທ້ອງຖະໜົນ ເຄື່ອນໄຫວວຽກງານຕາມຫລັກການຕໍ່ໄປນີ້ :

7.1. ທຸກການເຄື່ອນໄຫວ ຂອງຄະນະກຳມະການແຫ່ງຊາດ ດ້ານຄວາມປອດໄພຕາມທ້ອງຖະໜົນ ແມ່ນ ຍຶດໝັ້ນຕາມແນວທາງນະໂຍບາຍຂອງພັກ ແລະ ແຜນຍຸດທະສາດຂອງລັດຖະບານ ໃນດ້ານຄວາມປອດໄພຕາມທ້ອງຖະໜົນ;

7.2. ເຮັດວຽກຕາມຫລັກການລວມສູນປະຊາທິປະໄຕ ບົນພື້ນຖານຄວາມເປັນເອກະພາບຂອງໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ, ເຮັດວຽກຢ່າງມີແຜນການ, ມີການສະຫລຸບຕີລາຄາ, ຖອດຖອນບົດຮຽນ ແລະ ປະຕິບັດລະບອບສ່ອງແສງ, ລາຍງານໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ

ພາຍໃນ ແລະ ຕ່າງປະເທດເປັນປົກກະຕິ, ພ້ອມທັງຕີລາຄາຜົນສຳເລັດໃນການຊີ້ນຳ - ນຳພາ, ການຈັດຕັ້ງປະຕິບັດວຽກງານ ໃນແຕ່ລະໄລຍະ ເພື່ອລາຍງານໃຫ້ລັດຖະບານຊາບ;

7.3. ຈັດກອງປະຊຸມຄົ້ນຄ້ວາ, ສະຫລຸບຖອດຖອນບົດຮຽນ ໃນການຈັດຕັ້ງປະຕິບັດວຽກງານ ຂອງຂະບວນການ ດ້ານຄວາມປອດໄພຕາມເສັ້ນທາງ ເປັນປົກກະຕິ;

7.4. ປະສານງານ ແລະ ຮ່ວມມືກັບບັນດາອົງການຈັດຕັ້ງສາກົນ ທີ່ເຮັດວຽກດ້ານຄວາມປອດໄພຕາມເສັ້ນທາງ ຕາມລະບຽບຫລັກການ ທີ່ໄດ້ກຳນົດໄວ້.

**ມາດຕາ 8. ໜ້າທີ່ ແລະ ຂອບເຂດສິດ ຂອງປະທານ**

ປະທານ ຂອງ ຄຊປທ ມີໜ້າທີ່ ແລະ ສິດຕົ້ນຕໍ ດັ່ງນີ້ :

8.1. ຮັບຜິດຊອບທຸກການເຄື່ອນໄຫວ ຂອງ ຄຊປທ ໂດຍມີການວາງທິດທາງ, ແຜນການ, ການປະສານງານກັບພາກສ່ວນຕ່າງໆຢູ່ພາຍໃນ, ການພົວພັນຮ່ວມມືກັບຕ່າງປະເທດ ແລະ ສາກົນ;

8.2. ເປັນປະທານກອງປະຊຸມສາມັນ ແລະ ວິສາມັນ ຂອງ ຄຊປທ;

8.3. ເປັນຜູ້ລົງລາຍເຊັນ ກ່ຽວກັບເອກະສານສຳຄັນ ຂອງ ຄຊປທ;

8.4. ລາຍງານຜົນ ຂອງການດຳເນີນງານໃນແຕ່ລະໄລຍະ ຂອງ ຄຊປທ ຕໍ່ລັດຖະບານ;

8.5. ແບ່ງຄວາມຮັບຜິດຊອບໃຫ້ແຕ່ລະທ່ານ ໃນ ຄຊປທ.

**ມາດຕາ 9. ໜ້າທີ່ ແລະ ຂອບເຂດສິດ ຂອງຮອງປະທານ ແລະ ຄະນະກຳມະການ**

ຮອງປະທານ ແລະ ຄະນະກຳມະການ ຂອງ ຄຊປທ ມີໜ້າທີ່ ແລະ ສິດຕົ້ນຕໍ ດັ່ງນີ້ :

9.1. ຮອງປະທານ ເປັນຜູ້ຊ່ວຍປະທານ ພ້ອມທັງເປັນຜູ້ປະຈຳການ ຮັບຜິດຊອບລົງເລິກວຽກງານໃດໜຶ່ງທີ່ປະທານມອບໝາຍໃຫ້. ກໍລະນີປະທານບໍ່ຢູ່, ຮອງປະທານຜູ້ທີ່ໄດ້ຮັບມອບໝາຍໃຫ້ປະຕິບັດໜ້າທີ່ແທນປະທານ ເປັນຜູ້ຮັບຜິດຊອບແທນໃນການລົງລາຍເຊັນ, ເປັນປະທານກອງປະຊຸມ ແລະ ຊີ້ນຳການເຄື່ອນໄຫວວຽກງານຕ່າງໆ ແລະ ມີໜ້າທີ່ເຊັນເອກະສານທົ່ວໄປຂອງ ຄຊປທ;

9.2. ຮອງປະທານ ແລະ ຄະນະກຳມະການ ມີສິດປະກອບຄຳຄິດຄຳເຫັນຕໍ່ບັນຫາຕ່າງໆ ລວມທັງແຜນດຳເນີນງານ, ແຜນງົບປະມານ ແລະ ການສັງເກດຕີລາຄາ, ສະຫລຸບຖອດຖອນບົດຮຽນໃນການປະຕິບັດວຽກງານຕ່າງໆ ຂອງ ຄຊປທ ໃນແຕ່ລະໄລຍະ;

9.3. ລາຍງານສະພາບການຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ກວດກາ ຄວາມປອດໄພຕາມທ້ອງຖະໜົນຕໍ່ກອງປະຊຸມ ແລະ ນຳເອົາມະຕິຕົກລົງຂອງກອງປະຊຸມ ໄປລາຍງານໃຫ້ຂັ້ນນຳຂອງຕົນຊາບ, ພ້ອມທັງຜັນຂະຫຍາຍໃຫ້ເປັນອັນລະອຽດ ແລະ ຮັບຜິດຊອບ ຈັດຕັ້ງປະຕິບັດມະຕິຕົກລົງດັ່ງກ່າວ ໃນຂະແໜງການຂອງຕົນ;

9.4. ສະເໜີປະທານ ເພື່ອຮຽກປະຊຸມວິສາມັນ ໃນກໍລະນີທີ່ເກີດມີບັນຫາອັນຮີບດ່ວນ.

**ມາດຕາ 10. ໜ້າທີ່ ແລະ ຂອບເຂດສິດ ຂອງຫົວໜ້າກອງເລຂາ**

ຫົວໜ້າກອງເລຂາ ມີໜ້າທີ່ ແລະ ສິດຕົ້ນຕໍ ດັ່ງນີ້ :

10.1. ຮັບຜິດຊອບລວມ ວຽກງານຂອງກອງເລຂາຕໍ່ ຄຊປທ;

10.2. ນຳພາກອງເລຂາ ຈັດຕັ້ງປະຕິບັດວຽກງານຕ່າງໆ ທີ່ໄດ້ກຳນົດໄວ້ໃນລະບຽບການ ທີ່ ຄຊປທ ໄດ້ມອບໝາຍໃຫ້ ເຊັ່ນ :

- ສະຫລຸບ, ຮ່າງແຜນການເຄື່ອນໄຫວວຽກງານ ແລະ ຂື້ນແຜນງົບປະມານປະຈຳປີ ຂອງ ຄຊປທ ແລະ ຂອງກອງເລຂາ ນຳສະເໜີຕໍ່ ຄຊປທ ເພື່ອພິຈາລະນາ;
- ຄົ້ນຄ້ວາ, ປັບປຸງພາລະບົດບາດ ຂອງ ຄຊປທ ໃຫ້ສອດຄ່ອງກັບສະພາບການໃນແຕ່ລະໄລຍະ ແລະ ພາລະບົດບາດ ຂອງຄະນະກຳມະການດ້ານຄວາມປອດໄພ ຂອງແຂວງ ແລະ ນະຄອນຫລວງ ເພື່ອນຳສະເໜີ ຄຊປທ ພິຈາລະນາຮັບຮອງ;
- ປະສານສົມທົບກັບບັນດາຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອສຶກສາ, ຄົ້ນຄ້ວາແຜນການຄຸ້ມຄອງ ແລະ ກວດກາຄວາມປອດໄພຕາມທ້ອງຖະໜົນ; ເພື່ອຮ່າງນະໂຍບາຍ ແລະ ລະບຽບການຄຸ້ມຄອງທາງດ້ານເຕັກນິກ ແລະ ເພື່ອໂຄສະນາ, ເຜີຍແຜ່ຂໍ້ມູນຂ່າວສານຕ່າງໆ ທີ່ພົວພັນກັບການຄຸ້ມຄອງ ແລະ ກວດກາຄວາມປອດໄພທາງຖະໜົນ;
- ຄຸ້ມຄອງ ບໍລິຫານວຽກງານຕ່າງໆ ຂອງ ຄຊປທ ເຊັ່ນ : ຄຸ້ມຄອງງົບປະມານ ກໍ່ຄືຄຸ້ມຄອງບັນຊີ, ການເງິນ ແລະ ຊັບສົມບັດທັງໝົດ ຂອງ ຄຊປທ;
- ຕິດຕາມ, ຊຸກຍູ້ ແລະ ສົ່ງເສີມການຈັດຕັ້ງປະຕິບັດລະບຽບກົດໝາຍ ກ່ຽວກັບການຈະລາຈອນທາງບົກ ແລະ ລະບຽບກົດໝາຍອື່ນໆ ທີ່ກ່ຽວຂ້ອງ;
- ປະສານສົມທົບ ກັບຄະນະກຳມະການຄຸ້ມຄອງຄວາມປອດໄພຕາມທ້ອງຖະໜົນ ຂອງແຂວງ ແລະ ນະຄອນ, ເພື່ອສັງລວມ ແລະ ວິໄຈສະພາບການ ດ້ານຄວາມປອດໄພຕາມທ້ອງຖະໜົນຢູ່ໃນຂອບເຂດທົ່ວປະເທດ ພ້ອມທັງລາຍງານໃຫ້ ຄຊປທ ຮັບຊາບຢ່າງເປັນປົກກະຕິ;
- ກະກຽມ ການຈັດກອງປະຊຸມສາມັນ ແລະ ວິສາມັນ ຂອງ ຄຊປທ ພ້ອມທັງເຮັດບົດບັນທຶກຂອງກອງປະຊຸມໃນແຕ່ລະຄັ້ງ.

## ໝວດທີ V
## ແຫລ່ງລາຍຮັບ ແລະ ເປົ້າໝາຍການນຳໃຊ້

**ມາດຕາ 11. ແຫລ່ງລາຍຮັບ**

ອະນຸຍາດໃຫ້ຄະນະກຳມະການແຫ່ງຊາດ ດ້ານຄວາມປອດໄພຕາມທ້ອງຖະໜົນ ສ້າງຕັ້ງກອງທຶນຄວາມປອດໄພທ້ອງຖະໜົນຂຶ້ນ ໂດຍມີແຫລ່ງລາຍຮັບມາຈາກ :

- ງົບປະມານປະຈຳປີ ຂອງລັດຖະບານ ;
- ການປັບໃໝຜູ້ລະເມີດກົດລະບຽບຈະລາຈອນທາງບົກ, ການຂົນສົ່ງທາງບົກ ແລະ ທາງຫລວງ;
- ການເກັບຄ່າປ້າຍທະບຽນລົດ ທີ່ມີການປະມູນຕາມການຕົກລົງຂອງ ກະຊວງ ຄຂປກ;
- 10 % ຈາກລາຍຮັບປະຈຳປີ ຂອງກອງທຶນບູລະນະຮັກສາທາງຫລວງ ;
- ການປະກອບສ່ວນ ຂອງພາກລັດ , ເອກະຊົນ, ພາຍໃນ ແລະ ຕ່າງປະເທດ ລວມທັງສະຖາບັນການເງິນສາກົນ ;
- ການນຳໃຊ້ລົດປະຈຳປີ ແລະ ລາຍຮັບອື່ນໆ ທີ່ກ່ຽວຂ້ອງກັບຄວາມປອດໄພຕາມທາງບົກ.

**ມາດຕາ 12. ເປົ້າໝາຍການນຳໃຊ້ເງິນຂອງກອງທຶນ ຄວາມປອດໄພທາງຖະໜົນ**

ເງິນຂອງກອງທຶນຄວາມປອດໄພທາງຖະໜົນ ຕ້ອງນຳໃຊ້ເຂົ້າໃນວຽກງານ ດັ່ງນີ້ :

- ວຽກງານ ກວດກາຄວາມປອດໄພຕາມທ້ອງຖະໜົນ ເປັນປະຈຳ;
- ວຽກງານ ໂຄສະນາ ກ່ຽວກັບຄວາມປອດໄພຕາມທ້ອງຖະໜົນ;
- ວຽກງານ ການພິມເອກະສານຕ່າງໆ ກ່ຽວກັບຄວາມປອດໄພຕາມທ້ອງຖະໜົນ ;
- ວຽກງານ ກອບກູ້ຊີວິດ ໃນເວລາເກີດອຸປະຕິເຫດ ;
- ວຽກງານ ບໍລິຫານ ແລະ ການຄຸ້ມຄອງ ຄວາມປອດໄພຕາມທ້ອງຖະໜົນ ;
- ວຽກງານ ຍົກລະດັບຄວາມສາມາດ ແລະ ອຸປະກອນຮັບໃຊ້ ;
- ວຽກງານອື່ນໆ ທີ່ກ່ຽວຂ້ອງ ກັບຄວາມປອດໄພຕາມທ້ອງຖະໜົນ ;

ມອບໃຫ້ປະທານ ຄຊປທ ເປັນຜູ້ກຳນົດລະບຽບການລະອຽດ ໃນການຄຸ້ມຄອງ, ການນຳໃຊ້ງົບປະມານ ແລະ ລາຍຮັບອື່ນໆ ທີ່ໄດ້ກຳນົດໄວ້ຕາມດຳລັດສະບັບນີ້.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 13. ຕາປະທັບ**

ຄະນະກຳມະການແຫ່ງຊາດ ດ້ານຄວາມປອດໄພຕາມທ້ອງຖະໜົນ ມີຕາປະທັບເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນວຽກງານທາງລັດຖະການ. ສ່ວນຕາປະທັບຂອງກອງເລຂາ ແມ່ນໃຫ້ໃຊ້ຕາປະທັບຂອງກົມຂົນສົ່ງ; ຫ້ອງການ ກອງເລຂາຢູ່ຕ່າງແຂວງ ໃຫ້ໃຊ້ຕາປະທັບຂອງພະແນກ ຄຂປກ ຢູ່ແຂວງນັ້ນ.

**ມາດຕາ 14.** ມອບໃຫ້ ປະທານຄະນະກຳມະການແຫ່ງຊາດ ດ້ານຄວາມປອດໄພຕາມທ້ອງຖະໜົນ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

**ມາດຕາ 15. ການຈັດຕັ້ງປະຕິບັດ**

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຕາມພາລະບົດບາດ ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 16. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ບົວສອນ ບຸບຜາວັນ